Corner of Lanexang Avenue and
Samsenthai Road, Vientiane
Capital City, Lao PDR
Tel: +856 21 250444
Fax: +856 21 250333

www.adb.org

NEWS RELEASE

# ການຂະຫຍາຍຕົວຂອງ ສປປ ລາວ ເອດີບີ ຄາດວ່າ ຈະຂະຫຍາຍຕາມທິດທາງກຳໜົດໄວ້ສຳລັບປີ 2017 ແລະ 2018

**ນະຄອນຫຼວງວຽງຈັນ, ສປປ ລາວ (29 ກັນຍາ 2017) –** ທະນາຄານພັດທະນາອາຊີ (ເອດີບີ) ຄາດວ່າການຂະຫຍາຍຕົວທາງ ດ້ານເສດຖະກິດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະໄປຕາມທິດທາງຕາມທີ່ໄດ້ຄາດຄະເນໄວ້ໃນເດືອນເມສາທີ່ຜ່ານ ມາໃນອັດຕາ 6,9% ໃນປີ 2017 ເຖິງວ່າ ອັດຕາການຂະຫຍາຍຕົວໄດ້ຫຼຸດລົງເລັກໜ້ອຍໃນໄລຍະເຄິ່ງປີ 2017 ຊຶ່ງຂະຫຍາຍຕົວທີ່ 6,8% ກໍ່ຕາມ. ເອດີບີ ຄາດວ່າເສດຖະກິດຈະມີການຂະຫຍາຍຕົວຢ່າງໝັ້ນຄົງສຳລັບປີ 2017 ແລະ 2018 ຊຶ່ງການຄາດການດັ່ງກ່າວໄດ້ ລະບຸໄວ້ໃນບົດລາຍງານເສດຖະກິດປະຈຳປີຂອງ ເອດີບີ ທີ່ມີຊື່ບົດລາຍງານວ່າ ການຄາດຄະເນການພັດທະນາໃນອາຊີປະຈຳປີ 2017 ສະບັບປັບປຸງ, ເຊິ່ງໄດ້ຖືກນຳອອກມາເຜີຍແຜ່ໃນວັນທີ່ 26 ກັນຍາ ປີ 2017 ຜ່ານມາ.

ການຂະຫຍາຍຕົວຂອງເສດຖະກິດໃນປີ 2017 ແມ່ນໄດ້ຮັບແຮງຍູ້ໜູນອັນສຳຄັນຈາກການສົ່ງອອກກະແສໄຟຟ້າ, ບັນດາໂຄງ ການກໍ່ສ້າງພື້ນຖານໂຄງລ່າງລະດັບໃຫຍ່, ພ້ອມທັງ ການເພີ່ມຂຶ້ນຂອງການຜະລິດພືດຜັກທັນຍາຫານເພື່ອເປັນສິນຄ້າແລະການສົ່ງອອກສິນ ຄ້າກະສິກຳດັ່ງກ່າວ. ບົດລາຍງານເສດຖະກິດດັ່ງກ່າວຄາດວ່າ ການຂະຫຍາຍຕົວຂອງຜະລິດຕະພັນພາຍໃນ ຫລື ຈີດີພີ ຈະຂະຫຍາຍຕົວທີ່ 7% ສຳລັບປີ 2018.

ທ່ານ ຢະຊູຊິ ເນກິຊິ, ຜູ້ຕາງໜ້າ, ສຳນັກງານເອດີບີປະຈຳ ສປປ ລາວ ໄດ້ກ່າວວ່າ "ເສດຖະກິດຂອງ ສປປ ລາວ ແມ່ນພວມດຳເນີນ ໄປດ້ວຍດີໃນຂົງເຂດອາຊີຕາເວັນອອກສຽງໃຕ້. ບັນດາມາດຕະການທີ່ໄດ້ນຳມາປະຕິບັດໃນປີ 2016 ແລະ ຕົ້ນປີ 2017 ລວມທັງມາດຕະ ການຫັດກຸມດ້ານງົບປະມານລາຍຈ່າຍ ແລະ ການສົ່ງເສີມການລົງທຶນຂອງພາກເອກະຊົນ ເຫັນໄດ້ວ່າພວມຜັກດັນເສດຖະກິດໃຫ້ສືບຕໍ່ຂະ ຫຍາຍຕົວ".

ໃນບົດລາຍງານການພັດທະນາເສດຖະກິດປະຈຳປີ 2017 ສະບັບປັບປຸງ, ເອດີບີຄາດວ່າ ການພັດທະນາຂອງອາຊີມີຄວາມສົດໃສ ດ້ວຍອັດຕາການຂະຫຍາຍຕົວຂອງຈີດີພີ 5,9% ໃນປີ 2017 ແລະ 5,8% ໃນປີ 2018. ການຂະຫຍາຍຂອງການພັດທະນາໃນທົ່ວອາຊີ ແມ່ນໄດ້ຮັບແຮງໜູນຈາກການຟື້ນໂຕໃນໂລກດ້ານການຄ້າ ແລະ ຄວາມຕ້ອງການທີ່ມີຢ່າງຫຼວງຫລາຍຈາກສາທາລະນະລັດ ປະຊາຊົນຈີນ.ໃນຂະນະດຽວກັນ, ອັດຕາເງິນເຟີ້ສ່ວນໃຫຍ່ຍັງຢູ່ໃນລະດັບຄົງທີ່ ເຖິງວ່າ ລາຄານ້ຳມັນຈະຄົງທີ່ກໍ່ຕາມສຳລັບປີ 2017, ອັດຕາເງິນເຟີ້ ສະເລ່ຍສຳລັບພາກພື້ນອາຊີແມ່ນໄດ້ຖືກດັດປັບຈາກ 3,0% ລົງທີ່ 2,4%, ແລະ ຖືກປັບຈາກ 3,2% ລົງທີ່ 2,9% ສຳລັບປີ 2018. ໃນໄລຍະ 5 ເດືອນຕົ້ນປີ 2017, ອັດຕາການສົ່ງອອກຄິດເປັນສະກຸນເງິນໂດລາສະຫະລັດຂອງພາກພື້ນດັ່ງກ່າວເພີ່ມຂຶ້ນເປັນ 11% ຊຶ່ງເພີ່ມຂຶ້ນເກີນກ່ວາອັດຕາການສົ່ງອອກໃນໄລຍະດຽວກັນຂອງປີທີ່ຜ່ານມາ

**Media Inquiries**

Souphavanh Phonmany
Tel: + 856 21 250444 ext. 107
Mob. +856 20 55617237
E-mail: sphonmany@adb.org

**Connect with us on Twitter @ADB_HQ**

ແລະ ມູນຄ່າການນຳເຂົ້າກໍ່ໄດ້ເພີ່ມຂຶ້ນຄິດເປັນ 17%. ການເພີ່ມຂຶ້ນດັ່ງກ່າວເປັນຜົນມາຈາກມູນຄ່າສັນຍາການສົ່ງອອກສອງປີຕິດຕໍ່ກັນທີ່ເກີດຈາກການຫລຸດລົງຂອງລາຄາສິນຄ້າ ແລະ ອັດຕາ ຄວາມຕ້ອງການຜົນຜະລິດອຸດສະຫະກຳຈາກພາຍນອກທີ່ຍັງຄົງທີ່.

ຂົງເຂດອາຊີຕາເວັນອອກສຽງໃຕ້ຈະເຫັນໄດ້ມີການເຕີບໂຕທີ່ເຂັ້ມແຂງ ຍ້ອນຜົນຜະລິດຂະຫຍາຍຕົວຢ່າງຕໍ່ເນື່ອງຈາກ 5% ໃນ 2017 ຫາ 5,1% ໃນປີ 2018, ຊຶ່ງເພີ່ມຂຶ້ນຈາກອັດຕາການຂະຫຍາຍຕົວຈາກ 4,8% ແລະ 5% ທີ່ໄດ້ຄາດໄວ້ກ່ອນໜ້ານັ້ນຕາມລຳກັບ. ການຂະຫຍາຍຕົວໃນຂົງເຂດພາກພື້ນດັ່ງກ່າວນີ້ເປັນຜົນມາຈາກການສົ່ງອອກທີ່ເພີ່ມຂຶ້ນຈາກສິງກະໂປແລະມາເລເຊຍ, ໃນຂະນະທີ່ອິນໂດ ເນເຊຍ ແລະ ໄທ ຊຶ່ງເປັນປະເທດນຳໜ້າດ້ານການສົ່ງອອກແມ່ນຄາດວ່າຍັງຄົງຮັກສາອັດຕາເດີມຂອງການສົ່ງອອກ.

ໃນບົດລາຍງານໄດ້ລະບຸວ່າ ໂຄງການກໍ່ສ້າງທາງລົດໄຟຂ້າມຊາຍແດນ ແລະ ການກໍ່ສ້າງບັນດາໂຄງການພະລັງງານໄຟຟ້າລວມທັງໂຄງການ ພະລັງງານໄຟຟ້າໄຊຍະບູລີຂອງ ສປປ ລາວ ຊຶ່ງເປັນແຮງກະຕຸ້ນໃຫ້ເກີດກິດຈະກຳດ້ານເສດຖະກິດ, ການລົງທຶນທີ່ມີເພີ່ມຂຶ້ນຕື່ມອີກ 50 ບໍລິສັດ ໃນເຄິ່ງທຳອິດຂອງປີ 2017 ຢູ່ໃນບັນດາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ, ພ້ອມດ້ວຍ ການຜະລິດພືດຜັກທັນຍາຫານເພື່ອການຄ້າ ແລະ ການສົ່ງອອກສິນຄ້າກະສິກຳເຫຼົ່ານັ້ນຈະຜັກດັນໃຫ້ເສດຖະກິດສືບຕໍ່ຂະຫຍາຍຕົວໃນປີ 2017.

ພາຍໃນປີນີ້, ກະສິກຳແມ່ນຂະແໜງໜຶ່ງທີ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ເນື່ອງຈາກການຜະລິດເຂົ້າ ແລະ ພືດຜັກທັນຍາຫານເພື່ອເປັນສິນຄ້າ ແມ່ນໄດ້ຮັບຜົນດີເນື່ອງຈາກອາກາດທີ່ອຳນວຍ. ອັດຕາຂະຫຍາຍຕົວຂອງຂະແໜງບໍລິການແມ່ນຂະຫຍາຍຕົວຫຼຸດລົງເລັກໜ້ອຍກ່ວາອັດຕາຂະຫຍາຍ ຕົວທີ່ໄດ້ຄາດໄວ້ໃນເດືອນເມສາທີ່ຜ່ານມາ, ພາຍຫຼັງທີ່ອັດຕາການເຂົ້າມາຂອງຈຳນວນນັກທ່ອງທ່ຽວໄດ້ຫຼຸດລົງຄິດເປັນ 9,8% ໃນເຄິ່ງທຳອິດຂອງປີ 2017. ໃນໄລຍະເຄິ່ງປີດັ່ງກ່າວ, ອັດຕາການຂະຫຍາຍຕົວຂອງຂະແໜງອຸດສະຫະກຳຍັງຄົງຊົງໂຕ ເຖິງວ່າໄດ້ມີການສົ່ງອອກແຮ່ທາດຄຳເພີ່ມຂຶ້ນໃນ ອັດຕາ 14,5% ແຕ່ການຂະຫຍາຍຕົວທີ່ເຊື່ອງຊ້າໃນບັນດາຕະຫຼາດສາກົນເຮັດໃຫ້ລວມຍອດຜົນໄດ້ຮັບຈາກຂະແໜງການບໍ່ແຮ່ຂ້ອນຂ້າງຢູ່ໃນລະ ດັບຄົງທີ່.

ບົດລາຍງານຍັງໄດ້ລະບຸວ່າໃນປີນີ້, ອັດຕາການຂາດດຸນຊຳລະກັບຕ່າງປະເທດຄາດວ່າຈະຫຼຸດລົງຈາກອັດຕາທີ່ໄດ້ຄາດການໄວ້ໃນເດືອນ ເມສາ ທີ່ ຜ່ານມາ, ແລະ ອັດຕາຂາດດຸນງົບປະມານດັ່ງກ່າວຈະກັບມາຂາດດຸນເພີ່ມອີກໃນປີ 2018 ແຕ່ຈະຂາດດຸນໜ້ອຍກ່ວາອັດຕາທີ່ໄດ້ຄາດການໄວ້ກ່ອນໜ້ານີ້ ເນື່ອງຈາກມີການນຳເຂົ້າເຄື່ອງຈັກແລະອຸປະກອນກໍ່ສ້າງ ພ້ອມດ້ວຍ ປະລິມານເພີ່ມຂຶ້ນຂອງການນຳໃຊ້ເຊື້ອໄຟສະໜອງໃຫ້ແກ່ໂຄງການກໍ່ສ້າງເສັ້ນທາງ ລົດໄຟແລະໂຮງຈັກຜະລິດໄຟຟ້າອີກ 7 ແຫ່ງ.

ເງິນທຶນສຳຮອງທີ່ເປັນສະກຸນເງິນຕ່າງປະເທດໄດ້ເພີ່ມຂຶ້ນສຸດທິ 887 ລ້ານໂດລາສະຫະລັດ ຊຶ່ງເພີ່ມຈາກ 767 ລ້ານໂດລາສະຫະລັດໃນ ທ້າຍປີ 2016 ຊຶ່ງສາມາດຮອງຮັບໃຫ້ແກ່ມູນຄ່າການສົ່ງອອກໄດ້ປະມານ 1,7 ເດືອນ. ອັດຕາເງິນເຟີ້ສຳລັບປີ 2017 ແລະ 2018 ຄາດວ່າຈະຫຼຸດລົງ ທັງສອງປີທີ່ 1,0% ແລະ 1,5% ຕາມລຳດັບ ອັນເນື່ອງມາຈາກລາຄານ້ຳມັນແລະອາຫານໃນປະຈຸບັນຍັງຢູ່ຄົງທີ່.

ບັນດາປັດໃຈສ່ຽງຕໍ່ການຄາດຄະເນດັ່ງກ່າວລວມທັງ ສະພາບການຄ້າແຮ່ທາດໃນຕະຫລາດສາກົນທີ່ຍັງຄົງບໍ່ສົດໃສ, ການຂະຫຍາຍຕົວຂອງເສດຖະກິດທີ່ຊ້າລົງຢ່າງບໍ່ຄາດຫັວງພ້ອມດ້ວຍຕະຫຼາດຄ້າກະແສໄຟຟ້າທີ່ສຳຄັນຂອງໄທ, ແລະເຊັ່ນເຄີຍກໍ່ແມ່ນການຜະລິດກະສິກຳໄດ້ຮັບຜົນກະທົບ ຈາກອາກາດທີ່ບໍ່ອຳນວຍ.

ເອດີບີ, ມີສຳນັກງານໃຫຍ່ຕັ້ງຢູ່ນະຄອນຫຼວງມະນີລາ, ມີໜ້າທີ່ເພື່ອຫຼຸດຜ່ອນຄວາມທຸກຍາກໃນຂົງເຂດອາຊີແລະປາຊີຟິກໂດຍຜ່ານການເຕີບໂຕເສດຖະກິດທີ່ສະເໝີພາບ, ການເຕີບໂຕທີ່ຍືນຍົງຕໍ່ສິ່ງແວດລ້ອມ ແລະ ການເຊື່ອມໂຍງໃນພາກພື້ນ. ສ້າງຕັ້ງຂຶ້ນໃນປີ 1966, ເອດີບີສະຫຼອງຄົບຮອບ 50 ປີຂອງການຮ່ວມມືພັດທະນາໃນຂົງເຂດ. ເອດີບີ ມີ 67 ສະມາຊິກໃນນັ້ນ 48 ປະເທດມາຈາກພາກພື້ນດັ່ງກ່າວ. ໃນປີ 2016, ການຊ່ວຍເຫຼືອຈາກເອດີບີມີມູນຄ່າທັງໝົດ 31,7 ຕື້ໂດລາ ໃນນັ້ນລວມມີມູນຄ່າ 14 ຕື້ໂດລາສະຫະລັດທີ່ໄດ້ຮັບຈາກການສົມທົບທຶນ.